*Souphanouvong University Journal of Multidisciplinary Research and Development*
2024,Vol. 10, No. 4, 155-161
https://doi.org/10.69692/SUJMRD1004155

# The Implementation Result of Comparative Method in the Instruction of Rural Development for Political Students at the Faculty of Education, Souphanouvong University; Academic Year 2020-2022

**Houmpheng OUDOMSITH[*1], Saiphone KHOTSAIGNO [2], Phetsanti VANNAPHA [3], Manivone VANPHAVONG [4] and Somchit SINGLORKHAM [5]**

*[1,2,4,5] Faculty of Education, Souphanouvong University Lao PDR*

*[3] LuangPrabang Teacher Training College Lao PDR*

***Correspondence:** Houmpheng OUDOMSITH, Faculty of Education, Souphanouvong University*
*Tel: +8562028039817;*
*E-mail: humpheng@gmail.com*

*Submitted: April 10, 2024*
*Revised: July 10, 2024*
*Accepted: September 20, 2024*

## Abstract

This research intended to evaluate the result of an instruction by using comparative local visit method for Rural development subject, which a subject of political students at the faculty of Education, Souphanouvong University; The research aimed to investigate the learning progress after leading student to conduct a local visit and learn from the real situation with local authority. The sample of research is targeted on the political students whom are the only one group to have the subject of Rural development in the curriculum with totally number of 5858 person with 2727 females included. The data collection is conducted by using the pretest and posttest to evaluate their learning progress difficulty level ranged between 0.40-0.86; and the reliability was of .84. The research found that the result of posttest after local visit is higher than the pretest in the class room with the significant level of.05; the learning progress of the students whom comes from different resident are not significant different; Student has very good attitude with the comparative method with learning by local visit.

**Keywords**: Local visit, Theory, Behavior, Resident

## 1. ພາກສະເໜີ

ຖືເອົາການພັດທະນາຊັບພະຍາກອນມະນຸດມະນຸດ ເປັນປັດ“ ຖຸ້ມຄອງ ແລະ ໄຈຕັດສິນການພັດທະນາປະເທດຊາດໃນໄລຍະໃໝ່ .ພັດທະນາສັງຄົມຢ່າງປະດິດສ້າງ ເພື່ອສ້າງສັງຄົມຍຸຕິທຳ ແລະ ສີວິໄລ ໃນນັ້ນຖືຄົນເປັນເປົ້າໝາຍ ແລະ ຈຸດສຸມຂອງການພັດທະນາ ສືບຕໍ່ເສີມ ຍຜົນສຳເລັດຂອງການປະຕິຮູບການສຶກສາ ກໍ່ຄືຂະຫຍາການພັດທະນາ ຊັບພະຍາກອນມະນຸດຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກ ສາແຫ່ງຊາດໃຫ້ມີຄຸນນະພາບມາດຕະຖານຂອງພາກພື້ນສາກົນ ແລະ , ມີຄວາມ ,ສືບຕໍ່ສ້າງຄົນລາວໃຫ້ເປັນພົນລະເມືອງດີ ;ທັນສະໄໝ ,ມີສະຕິເຄົາລົບກົດໝາຍ ,ຕໍ່ພັນທະພົນລະເມືອງ ,ຮັບຜິດຊອບຕໍ່ສັງຄົມ ຮັກອັນດີອັນຖືກຕ້ອງ ພ້ອມກັນນັ້ນ ກໍ່ເດັດດ່ຽວຕ້ານອັນຫຍໍ້ທໍ້ຫຼ້າຫຼັງ , ແລະ ທັດສະນະຜິດເຂວຕ່າງໆ ຕ້ານການເຊື່ອມຖອຍດ້ານແນວຄິດ ”ຄຸນສົມບັດ(ຄະນະໂຄສະນາອົບຮົມສູນກາງພັກ, 2016).

ວິຊາພັດທະນາຊຸມຊົນ ແລະ ຊົນນະບົດ ເປັນວິຊາໜຶ່ງໃນໝ ວດວິຊາຄວາມຮູ້ພື້ນຖານວິຊາສະເພາະ ຂອງຫຼັກສູດປະລິນຍາຕີສຶກສາ ສາດ ສາຂາຄູວິທະຍາສາດການເມືອງ ເຊິ່ງເປັນວິຊາທີ່ມີຄວາມສາຄັນໃນ ການເຜີຍແຜ່ຜັນຂະຫຍາຍແນວທາງນະໂຍບາຍ ແລະ ບັນດາແຜນຍຸດ ທະສາດການພັດທະນາຊົນນະບົດຂອງພັກ-ລັດເຮົາ ໂດຍໄດ້ມີການສຶກ ສາເຖິງ “ຄວາມໝາຍ ແລະ ຫຼັກການຂອງການພັດທະນາຊົນນະບົດ, ການມີສ່ວນຮ່ວມຂອງຊຸມຊົນ, ຫຼັກການເພິ່ງຕົນເອງຂອງຊຸມຊົນ, ຄວາມເຂົ້າໃຈກ່ຽວກັບຕົວເມືອງ ແລະ ຊົນນະບົດ, ການບໍລິຫານວຽກ ງານຊົນນະບົດ, ການວາງແຜນ ແລະ ການສ້າງບ້ານເປັນຫົວໜ່ວຍ ພັດທະນາ, ການສຶກສາສາກັບການພັດທະນາ” (ສູນພັດທະນາຄູ ແລະ ກົມສ້າງຄູ, 2019).

ໃນຄວາມເປັນຈິງແລ້ວ, ການຈັດການຮຽນ-ການສອນຂອງຄູ ແມ່ນມີຫຼາຍຮູບແບບ ແລະ ຫຼາຍວິທີ ທີ່ມີຄວາມສະເພາະ ແລະ ເໝາະ ສົມໃນແຕ່ລະສະພາບແວດລ້ອມທີ່ແຕກຕ່າງກັນ ແຕ່ເຖິງຢ່າງໃດກໍ່ຕາມ ເປົ້າໝາຍຂອງບັນດາເຕັກນິກວິທີການເຫຼົ່ານັ້ນ ກໍ່ແມ່ນສິ່ງດຽວກັນຄື: ການສ້າງໃຫ້ຜູ້ຮຽນເກີດປະສົບການຮຽນຮູ້ດ້ວຍຕົນເອງໃຫ້ຫຼາຍທີ່ສຸດ ເທົ່າທີ່ຈະຫຼາຍໄດ້ ເຊິ່ງປັດໄຈສາຄັນທີ່ເອື້ອຕໍ່ການເກີດປະສົບການ ເຫຼົ່ານັ້ນກໍ່ຄື ການໄດ້ສຳພັດກັບເຫດການ ແລະ ປະສົບການຈິງທີ່ ກ່ຽວຂ້ອງເນື້ອໃນບົດຮຽນທີ່ເຂົາເຈົ້າພວມຮຽນໃນຫ້ອງຮຽນ (ທິດສະ

ນາ ແຂມມະນີ, 2012). ຫຼັກການນີ້ກໍ່ເລີ່ມມາຈາກຫຼັກມູນການສຶກສາຂອງພັກເຮົາທີ່ວ່າ: ຮຽນຕ້ອງໄປຄຽງຄູ່ກັບການເຮັດການສຶກສາຕ້ອງ, ,ປະສານສົມທົບກັບການອອກແຮງງານຜະລິດໂຮງຮຽນຕ້ອງຕິດພັນສັງຄົມ. ສະນັ້ນ, ການສອນ ແລະ ການຮຽນວິຊາສຶກສາພົນລະເມືອງຕ້ອງແນ່ໃສ່ກຳໄດ້ຢ່າງຊັດເຈນ ,ເໜັ້ນໜັກບັນດາຄວາມຮູ້ວິທະຍາສາດດັ່ງກ່າວ ເພື່ອຈະແກ້ໄຂອະທິບາຍບັນດາບັນຫາດັ່ງກ່າວທີ່ຈະປະເຊີນໜ້າກັບເຫດການຕົວຈິງຂອງສັງຄົມ

ການປະຕິບັດຫຼັກການຮັບປະກັນລັກສະນະພຶດຕິກຳ ບໍ່ຈຳກັດພຽງແຕ່ຢູ່ໃນຂອດການສອນ ,ອະທິບາຍທີ່ຢູ່ໃນບົດຕົວຢ່າງ ,ບົດເລົ່າເລື່ອງຂອງຄູຢູ່ໃນຫ້ອງຮຽນເທົ່ານັ້ນ ແຕ່ຍັງໄດ້ປະຕິບັດຢູ່ໃນບັນດາຂອດຮູບການຈັດຕັ້ງການສອນ :ການຮຽນຄື-ຢູ່ໃນການສົນທະນາ ,ການສຳມະນາ .ໄປຄົ້ນຄວ້າຊອກຮູ້ຕົວຈິງຢູ່ໃນສັງຄົມ,ໄປທັດສະນະສຶກສາ, ການເຄື່ອນໄຫວຕົວຈິງທັງໝົດນັ້ນ ແມ່ນແນ່ໃສ່ເຮັດໃຫ້ນັກຮຽນກໍາໄດ້ຄວາມຮູ້ວິທະຍາສາດຢ່າງຖືກຕ້ອງ ແລະ ເປັນການຝຶກຝົນຫຼໍ່ຫຼອມທັດສະນະ ,ຄຸນສົມບັດໃຫ້ນັກຮຽນອີກດ້ວຍ (ຄະນະສຶກສາສາດ, 2018).

ຕະຫຼອດໄລຍະທີ່ຜ່ານມາ ການຈັດການຮຽນ-ການສອນວິຊາພັດທະນາຊຸມຊົນ ແລະ ຊົນນະບົດ ສ່ວນໃຫຍ່ແມ່ນດາເນີນການຢູ່ພາຍໃນຫ້ອງຮຽນ ແລະ ພາຍໃນມະຫາວິທະຍາໄລ ໂດຍເນັ້ນການບັນຍາຍພາກທິດສະດີ ແລະ ສົມທຽບກັບທິດທາງ ແລະ ແຜນການພັດທະນາເສດຖະກິດສັງຄົມຂອງພັກ-ລັດວາງອອກເປັນຫຼັກ, ຍັງບໍ່ໄດ້ມີການນຳພານັກສຶກສາລົງຮໍ່າຮຽນບົດຮຽນຕົວຈິງກັບຊຸມຊົນຮາກຖານຕ່າງໆເທື່ອ ອັນເຮັດໃຫ້ນັກສຶກສາຂາດຄວາມຮູ້ທາງປະສົບການ ແລະ ເຮັດໃຫ້ການຮຽນ-ການສອນວິຊານີ້ ແມ່ນບໍ່ເປັນໄປຕາມຫຼັກການສົມທຽບທິດສະດີ ແລະ ພຶດຕິກຳຂອງການສອນວິທະຍາສາດການເມືອງເທື່ອ. (Souphanovong University, 2022)

ສະນັ້ນ, ເຫັນໄດ້ຄວາມສາຄັນຂອງການສ້າງປະສົບການຈິງໃຫ້ກັບຜູ້ຮຽນ ດັ່ງທີ່ກ່າວມາຂ້າງເທິງ ໃນນາມທີ່ເປັນຄູສອນ ວິຊາການພັດທະນາຊຸມຊົນ ແລະ ຊົນນະບົດ ຈຶ່ງໄດ້ເກີດມີຄວາມມຸ່ງຫວັງໃນການຈັດການຮຽນຮູ້ໃນລາຍວິຊາຂອງຕົນເອງ ເພື່ອໃຫ້ນັກສຶກສາເກີດປະສົບການຮຽນຮູ້ ທີ່ພຽບພ້ອມທັງທິດສະດີ ແລະ ພຶດຕິກຳຕົວຈິງ ໂດຍໄດ້ມີການສົມທົບກັບທາງອຳນາດການປົກຄອງທ້ອງຖິ່ນ ເພື່ອຈັດຕັ້ງໃຫ້ມີຂະບວນການລົງຮາກຖານຮຽນຮູ້ກັບຊຸມຊົນ-ຊົນນະບົດ ຂອງນັກສຶກສາໃນແຕ່ລະປີ ແລະ ໄດ້ມີການເກັບກຳຮວບຮວມຂໍ້ມູນ ເພື່ອເຮັດການຄົ້ນຄວ້າສຶກສາຫາຊ່ອງທາງໃນການປັບປຸງຮູບແບບການຈັດການຮຽນຮູ້ແກ່ນັກສຶກສາ ໃຫ້ມີຄວາມແທດເໝາະກັບສະພາບຕົວຈິງຂອງນັກສຶກສາ ແລະ ຊຸມຊົນ ໃນແຕ່ລະໄລຍະ ແລະ ທັງຮັບປະກັນທາງດ້ານເນື້ອໃນທາງວິຊາການ ໂດຍມີແມ່ນມີຈຸດປະສົງເພື່ອປະເມີນຜົນການຮຽນຂອງນັກສຶກສານັບທັງຕອນຮຽນພາກທິດສະດີ ແລະ ພາຍຫຼັງກັບຈາກການລົງຮາກຖານຊຸມຊົນ, ດາເນີນການປຽບທຽບຜົນການຮຽນຂອງນັກສຶກສາ ທີ່ມາຈາກພູມລຳເນົາເດີມແຕກຕ່າງກັນ ແລະ ສຶກສາທັດສະນະຄະຕິຂອງເຂົາເຈົ້າຕໍ່ກັບການຈັດການຮຽນຮູ້ແບບສົມທຽບທິດສະດີ ແລະ ພຶດຕິກຳຕົວຈິງ ໃນວິຊາພັດທະນາຊຸມຊົນ ແລະ ຊົນນະບົດ.

## 2. ອຸປະກອນ ແລະ ວິທີການ

### 2.1 ວິທີດຳເນີນການຄົ້ນຄວ້າ

ການຄົ້ນຄັ້ງນີ້ ເປັນການວິໄຈແບບທົດລອງ ເນືອງສະເຫຼີມ (2013)ເຊິ່ງຜູ້ຄົ້ນຄວ້າໄດ້ດຳເນີນການຄົ້ນຄວ້າແບບ Pretest-Posttest Design ໂດຍມີການທົດສອບກ່ອນ ແລະ ຫຼັງການລົງຮາກຖານຊຸມຊົນເພື່ອປຽບທຽບຜົນຄະແນນຂອງນັກສຶກສາ ຕາມປັດໄຈພູມລາເນົາເດີມຂອງນັກສຶກສາ ເຊິ່ງສາມາດອະທິບາຍຮູບແບບການວິໄຈໄດ້ດັ່ງນີ້:

| ສອບກ່ອນ | ທົດລອງ | ສອບຫຼັງ |
|---|---|---|
| $O_1$ | X | $O_2$ |

ນອກຈາກນີ້, ພາຍຫຼັງສາເລັດການລົງຮາກຖານຊຸມຊົນແລ້ວ ຜູ້ຄົ້ນຄວ້າຍັງໄດ້ມີການ ປະເມີນທັດສະນະຄະຕິຂອງນັກສຶກສາ ທີ່ມີຕໍ່ການຮຽນຮູ້ພຶດຕິກຳຈິງກັບຊຸມຊົນນຳອີກ

### 2.2 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍສຳລັບການຄົ້ນຄວ້າໃນຄັ້ງນີ້ ແມ່ນເຈາະຈົງເອົາສະເພາະນັກສຶກສາຄູວິທະຍາສາດການເມືອງ ໂດຍໄດ້ມີການປະເມີນກ່ອນ (ພາຍຫຼັງທິດສະດີ) ໃນຫ້ອງຮຽນ ແລະ ປະເມີນພາຍຫຼັງກັບມາຈາກການລົງຮາກຖານຊຸມຊົນ, ໂດຍມີການເກັບກາຂໍ້ມູນເລີ່ມແຕ່ສົກສຶກສາ 2020-2021 ຈົນຮອດສົກສຶກສາ 2021-2022 ລວມນັກສຶກສາທັງໝົດ 58 ຄົນ, ຍິງ 27 ຄົນ. (ສຳນັກງານສະຖິຕິແຫ່ງຊາດ , 2014)

### 2.3 ເນື້ອໃນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ ເປັນການທົດລອງຈັດການຮຽນຮູ້ໂດຍການນຳພານັກສຶກສາລົງຮຽນຮູ້ຕົວຈິງກັບຊຸມຊົນຊົນນະບົດ ພາຍຫຼັງທີ່ໄດ້ຮຽນພາກທິດສະດີໃນຫ້ອງຮຽນ, ໂດຍໄດ້ມີການເກັບຂໍ້ມູນຜົນການຮຽນຂອງນັກສຶກສາໂດຍການໃຊ້ແບບປະເມີນເພື່ອວັດລະດັບຄວາມເຂົ້າໃຈຂອງນັກສຶກສາ ຕໍ່ກັບວຽກງານການພັດທະນາຊົນນະບົດ ໂດຍສົມທຽບທິດສະດີ ແລະ ພຶດຕິກຳ ໂດຍໄດ້ດາເນີນການປະເມີນຄັ້ງທາອິດ (Pretest) ຢູ່ຫ້ອງຮຽນພາຍຫຼັງຮຽນພາກທິດສະດີ ແລະ ດາເນີນການປະເມີນອີກຄັ້ງໜຶ່ງ ພາຍຫຼັງສາເລັດການລົງຮາກຖານຊຸມຊົນເປັນເວລາ 1 ອາທິດ

### 2.4 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາໃນຄັ້ງນີ້ແມ່ນແບບປະເມີນລະດັບຄວາມເຂົ້າໃຈຂອງນັກສຶກສາຕາມທິດສະດີຂອງ Bloom Taxonomy ໂດຍມີ 2 ຊຸດດ້ວຍກັນຄື ແບບປະເມີນກ່ອນ ແລະ

ພາຍຫຼັງການລົງຊຸມຊົນຮາກຖານ ເຊິ່ງເປັນແບບປະລາໄນຈຳນວນ 20 ຂໍ້ ສ້າງໂດຍອີງຫຼັກການການປະເມີນຜົນການຮຽນຂອງ (American Heritage Schools, 2021) ໂດຍແຍກເປັນ 5 ກຸ່ມຄຳຖາມ ຄື: ຄຳຖາມປະເມີນຄວາມເຂົ້າໃຈບົດຮຽນ, ຄຳຖາມປະເມີນທັກສະດ້ານການນຳໃຊ້ບົດຮຽນ, ຄຳຖາມປະເມີນທັກສະການວິເຄາະທິດສະດີ ແລະ ພຶດຕິກຳຂອງບົດຮຽນ, ຄຳຖາມທັກສະການຕີລາຄາປະເມີນບົດຮຽນ ແລະ ຄາຖາມປະເມີນທັກສະການສ້າງຄວາມຮູ້ໃໝ່ຂອງນັກຮຽນ. ຊຸດຄາຖາມໃນແບບທົດສອບນີ້ແມ່ນສ້າງຂຶ້ນເພື່ອທົດສອບປະເມີນຄວາມຮັບຮູ້ຂອງນັກສຶກສາຕາມທີ່ໄດ້ລະບຸໄວ້ໃນແຜນການສອນຂອງວິຊາການພັດທະນາຊຸມຊົນ ແລະ ຊົນນະບົດ ໂດຍປະກອບມີ 6 ບົດດ້ວຍກັນ ແລະ ຊຸດຄາຖາມດັ່ງກ່າວນີ້ແມ່ນໄດ້ຜ່ານການກວດສອບຄຸນນະພາບ ທີ່ມີຄວາມຍາກງ່າຍ P = 0,47 ແລະ ຄ່າຄວາມເຊື່ອໝັ້ນທັງສະບັບ ($r_{xy}$) = 0,84;

### 2.5 ວິທີການເກັບກຳຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ ແມ່ນໄດ້ດຳເນີນໄປໂດຍໃຊ້ເວລາ 2 ສົກສຶກສາ ເລີ່ມແຕ່ສົກສຶກສາ 2020 ຫາ ສົກສຶກສາ 2022. ໂດຍຜູ້ວິໄຈໄດ້ມີການສ້າງເຄື່ອງມືແບບປະເມີນຂຶ້ນມາ ແລະ ນຳໄປທົດລອງກັບນັກສຶກສາຖູການເມືອງປີ 1 ເພື່ອກວດສອບຄຸນນະພາບ ແລະ ຄວາມຍາກງ່າຍຂອງແບບປະເມີນ, ຈາກນັ້ນ ຈຶ່ງໄດ້ນຳມາເກັບກຳຂໍ້ມູນກັບນັກສຶກສາ ປີ 3 ໃນສົກສຶກສາ 2020-2021; ເຊິ່ງເຫດຜົນທີ່ຕ້ອງທົດລອງນຳນັກສຶກສາປີ 1 ກໍ່ເນື່ອງຈາກຕ້ອງການຮັກສານັກສຶກສາປີ 2 ໄວ້ເປັນກຸ່ມທົດລອງໃນປີຕໍ່ມາ ເມື່ອເຂົາເຈົ້າສຶກສາຢູ່ປີທີ 3 ເພາະເປັນປີທີ່ຈະໄດ້ຮຽນວິຊາພັດທະນາຊຸມຊົນ ແລະ ຊົນນະບົດ. ການເກັບກາຂໍ້ມູນແມ່ນໄດ້ເລີ່ມຈາກການດຳເນີນການຮຽນ-ການສອນ ພາກທິດສະດີຈຳນວນ 6 ບົດຕາມຫຼັກສູດວິຊາ ແລ້ວດຳເນີນການປະເມີນທັນທີ (Pretest) ຈາກນັ້ນ ໄດ້ສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອນາພາເອົານັກສຶກສາລົງຮາກຖານຊຸມຊົນ ໂດຍການໃຊ້ຊີວິດກິນຢູ່ຮ່ວມກັບພໍ່ແມ່ປະຊາຊົນຢູ່ເຂດພູດອຍ ຂອງເມືອງງອຍ ແຂວງຫຼວງພະບາງ ເປັນເວລາ 1 ອາທິດ; ພາຍຫຼັງກັບຄືນມາຮອດສະຖາບັນຂອງຕົນເອງແລ້ວ ຈຶ່ງໄດ້ມີການປະເມີນຄວາມກ້າວໜ້າທາງການຮຽນຂອງນັກສຶກສາອີກ ຄັ້ງໜຶ່ງ (Posttest) ພາຍຫຼັງສຳເລັດການທົດສອບຄວາມຮູ້ຂອງນັກສຶກສາທັງສອງຄັ້ງແລ້ວ ຈຶ່ງໄດ້ດຳເນີນການປະເມີນທັດສະນະຄະຕິຂອງນັກສຶກສາ ເພື່ອນຳເອົາຂໍ້ມູນຈາກກຸ່ມເປົ້າໝາຍເຂົ້າສູ່ຂະບວນການວິເຄາະຂໍ້ມູນໃນອັນດັບຕໍ່ໄປ.

### 2.6 ການວິເຄາະຂໍ້ມູນ

ການຄົ້ນຄ້ວາຄັ້ງນີ້ ໄດ້ມີການດຳເນີນການວິເຄາະຂໍ້ມູນ ໂດຍໃຊ້ຊອບແວຣ໌ສຳເລັດຮູບ SPSS ມາວິເຄາະຂໍ້ມູນທີ່ໄດ້ລວບລວມມາ ໂດຍອາໄສສະຖິຕິທາງຄະນິດສາດຄື:

1) ໃຊ້ການວິເຄາະແບບ Paired-Samples T test ເພື່ອປຽບທຽບ ຂອງຄ່າສະເລ່ຍຂອງຜົນຄະແນນການທົດສອບກ່ອນ ແລະ ຫຼັງ ການລົງຊຸມຊົນຂອງນັກສຶກສາ

2) ໃຊ້ການວິເຄາະແບບ Independent-Samples T test ເພື່ອປຽບທຽບຄະແນນຜົນການຮຽນຂອງນັກສຶກສາ ທີ່ມາຈາກພູມລຳເນົາແຕກຕ່າງກັນ

3) ໃຊ້ສະຖິຕິຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ ເພື່ອວິເຄາະທັດສະນະຄະຕິ ຂອງນັກສຶກ ສາຕໍ່ກັບການຈັດການຮຽນຮູ້ແບບສົມທຽບທິດສະດີ ແລະ ພຶດຕິກຳ ໂດຍການລົງຮາກຖານຊຸມຊົນ

## 3. ຜົນໄດ້ຮັບ

ຜົນການປະເມີນຄວາມເຂົ້າໃຈຂອງນັກສຶກສາ ຕໍ່ກັບວຽກງານພັດທະນາຊົນນະບົດ ພົບວ່າ ພາຍຫຼັງການລົງຮາກຖານຮຽນຮູ້ກັບຊຸມຊົນກັບຄືນມາ ນັກສຶກສາແມ່ນມີຄວາມເຂົ້າໃຈເພີ່ມຂຶ້ນຕໍ່ກັບວຽກງານພັດທະນາຊົນນະບົດ ໂດຍມີຄະແນນປະເມີນສູງກ່ວາການປະເມີນພາຍຫຼັງຮຽນທິດສະດີໃນຫ້ອງຮຽນຢ່າງຊັດເຈນ ໂດຍໃນການປະເມີນກ່ອນນັ້ນຄວາມເຂົ້າໃຈຂອງນັກສຶກສາແມ່ນມີຄ່າສະເລ່ຍ $\bar{x} = 6.31$ ແລະ ຄ່າຜັນປ່ຽນມາດຖານ $S.D = 0.75$ ແລະ ການປະເມີນພາຍຫຼັງກັບມາຈາກການລົງຮາກຖານຊຸມຊົນ ນັກສຶກສາມີຄະແນນສະເລ່ຍ $\bar{x} = 7.57$ ແລະ ຄ່າຜັນປ່ຽນມາດຖານ $S.D = 0.97$; ນອກນີ້ມ ຜົນການປຽບທຽບຄ່າສະເລ່ຍຂອງຄະແນນການປະເມີນຂອງນັກສຶກສາກ່ອນ ແລະ ຫຼັງການລົງຮາກຖານຊຸມຊົນ ໂດຍໃຊ້ສະຖິຕິ Paired Samples Test ພົບວ່າຄະແນນກ່ອນ ແລະ ຫຼັງນັ້ນແມ່ນມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ Sig.< .05

**1)** ການປຽບທຽບຜົນການຮຽນ ຫຼື ລະດັບຄວາມເຂົ້າໃຈຕໍ່ກັບວຽກງານພັດທະນາຊົນນະບົດ ຂອງນັກສຶກສາທີ່ມາຈາກພູມລາເນົາເດີມຕ່າງກັນ ໃນຈຳນວນນັກສຶກສາກຸ່ມເປົ້າໝາຍ 58 ຄົນນັ້ນ ພົບວ່າມີນັກສຶກສາທີ່ມາຈາກຕົວເມືອງ ຈຳນວນ 21 ຄົນ ເຊິ່ງມີຄະແນນທົດສອບຫຼັງສະເລ່ຍ $\bar{x} = 7.50$ ແລະ ຄ່າຜັນປ່ຽນມາດຖານ $S.D = 1.07$; ໃນຂະນະທີ່ນັກສຶກສາທີ່ມາຈາກຊົນນະບົດນັ້ນ ແມ່ນມີຈຳນວນ 37 ຄົນ ເຊິ່ງມີຄະແນນທົດສອບຫຼັງສະເລ່ຍ $\bar{x} = 7.50$ ແລະ ຄ່າຜັນປ່ຽນມາດຖານ $S.D = 0.91$; ແລະ ຜ່ານການປຽບທຽບຄະແນນຜົນການຮຽນຂອງນັກສຶກສາທັງສອງກຸ່ມ ໂດຍໃຊ້ສະຖິຕິ Independent Samples Test ເຫັນວ່າ ຄະແນນຂອງທັງສອງກຸ່ມບໍ່ມີຄວາມແຕກຕ່າງກັນທາງສະຖິຕິທີ່ຊັດເຈນ, ໝາຍຄວາມວ່ານັກສຶກສາທີ່ມາຈາກຕົວເມືອງ ແລະ ນັກສຶກສາທີ່ມາຈາກຊົນນະບົດ ແມ່ນມີຜົນການຮຽນບໍ່ແຕກຕ່າງກັນ.

**2)** ຜົນການວັດທັດສະນະຄະຕິຂອງນັກສຶກສາ ຕໍ່ກັບການຈັດການຮຽນຮູ້ໂດຍການລົງຮາກຖານຊຸມຊົນ ໃນວິຊາພັດທະນາຊຸມຊົນ ແລະ ຊົນນະບົດ ພົບວ່ານັກສຶກສາມີທັດສະນະຄະຕິໃນລະດັບເຫັນດີຫຼາຍ ທີ່ລະດັບຄ່າສະເລ່ຍ $\bar{x} = 3.69$ ແລະ ຄ່າຜັນປ່ຽນມາດຖານ $S.D = 0.75$; ໂດຍສາມາດແບ່ງອອກເປັນ 4 ດ້ານດັ່ງນີ້:

- ດ້ານຫຼັກການຈັດການຮຽນຮູ້ ນັກສຶກສາແມ່ນມີທັດສະນະຄະຕິເຫັນດີໃນລະດັບຫຼາຍ ທີ່ຄ່າສະເລ່ຍ $\bar{x} = 3.46$ ແລະ ຄ່າຜັນປ່ຽນມາດຖານ $S.D = 0.71$

- ດ້ານການມີສ່ວນຮ່ວມຂອງຊຸມຊົນ ນັກສຶກສາແມ່ນມີທັດສະນະຄະຕິເຫັນດີ ໃນລະດັບຫຼາຍທີ່ສຸດ ທີ່ຄ່າສະເລ່ຍ $\bar{x} = 4.25$ ແລະ ຄ່າຜັນປ່ຽນມາດຖານ $S.D = 0.68$

- ດ້ານການພັດທະນາທັກສະຂອງນັກສຶກສາ ນັກສຶກສາແມ່ນມີທັດສະນະຄະຕິເຫັນດີໃນລະດັບກາງ ທີ່ຄ່າສະເລ່ຍ $\bar{x} = 3.50$ ແລະ ຄ່າຜັນປ່ຽນມາດຖານ $S.D = 0.73$

- ດ້ານການພັດທະນາຫຼັກສູດ ນັກສຶກສາແມ່ນມີທັດສະນະຄະຕິເຫັນດີໃນລະດັບປານກາງ ທີ່ຄ່າສະເລ່ຍ 0,82 $\bar{x} = 3.15$ ແລະ ຄ່າຜັນປ່ຽນມາດຖານ $S.D = 0.82$

**4. ວິພາກຜົນ**

ຈາກຜົນການຄົ້ນຄວ້າພົບວ່າ ນັກສຶກສາກຸ່ມເປົ້າໝາຍທັງໝົດແມ່ນມີຜົນຄະແນນການປະເມີນພາຍຫຼັງການລົງຮາກຖານຊຸມຊົນ ສູງກ່ວາຜົນຄະແນນການປະເມີນພາຍຫຼັງຮຽນພາກທິດສະດີ ໃນຫ້ອງຮຽນຢ່າງມີຄວາມສຳຄັນທາງສະຖິຕິ ອັນສືບເນື່ອງມາຈາກ ໃນການຈັດການຮຽນ-ການສອນວິຊາການພັດທະນາຊຸມຊົນ ແລະ ຊົນນະບົດ ແມ່ນໄດ້ມີການຍຶດຖືຫຼັກການສິບທຽບຫຼັກການທິດສະດີຕ່າງໆ ພ້ອມກັບຍົກພຶດຕິກຳ ຫຼື ປາກົດການຕົວຈິງປຽບທຽບໃຫ້ນັກສຶກສາເກີດມີແນວຄວາມຄິດສັງເຄາະຄວາມຮູ້ດ້ວຍຕົນເອງ, ອີກປະການໜຶ່ງວິຊາການພັດທະນາຊຸມຊົນ ແລະ ຊົນນະບົດນີ້ ກໍ່ຖືວ່າເປັນວິຊາໜຶ່ງທີ່ມີຄວາມສຳຄັນຕິດພັນກັບວຽກງານ 3 ສ້າງ ຂອງພັກປະຊາຊົນປະຕິວັດລາວ ແລະ ທັງເປັນວິຊາທີ່ນອນຢູ່ໃນໝວດວິຊາຄວາມຮູ້ພື້ນຖານວິຊາສະເພາະຂອງຫຼັກສູດຄູວິທະຍາສາດການເມືອງນຳອີກ. ໃນການຄົ້ນຄວ້າຄັ້ງນີ້ ຜູ້ວິໄຈໄດ້ມີການ ການກະກຽມຂັ້ນຕອນອັນລະອຽດ ເພື່ອກະຕຸ້ນໃຫ້ນັກສຶກສາເກີດປະສິບການຮຽນຮູ້ດ້ວຍຕົນເອງ ໂດຍຜ່ານກິດຈະກາທີ່ຕ່າງທີ່ຖືກວາງແຜນໄວ້ໃຫ້ນັກສຶກສາປະຕິບັດຮ່ວມກັນ ແລະ ຮ່ວມກັບຊຸມຊົນ, ທຸກກິດຈະກຳທີ່ຈັດຂຶ້ນລ້ວນແຕ່ມີເປົ້າໝາຍກໍ່ໃຫ້ເກີດປະສົບການກັບນັກສຶກສາໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ອີກດ້ານໜຶ່ງການຈັດການຮຽນຮູ້ແບບນີ້ ຖືໄດ້ວ່າເປັນການເພີ່ມຄວາມເຊື່ອໝັ້ນໃຫ້ແກ່ນັກສຶກສາ, ທັງເປັນການດຶງດູດ, ເພີ່ມບັນຍາກາດອັນດີຕໍ່ກັບການສອນ ແລະ ການຮຽນ ເຊິ່ງສາມາດສັງເກດໄດ້ເຖິງຄວາມແຕກຕ່າງກັນຂອງສະພາບຈິດໃຈຂອງນັກສຶກສາເວລາຮຽນຢູ່ຫ້ອງຮຽນ ແລະ ເວລາລົງຕົວຈິງຮຽນຮູ້ກັບຊຸມຊົນ ທີ່ມີຄວາມກະຕືລືລົ້ນແຕກຕ່າງກັນ ເຮັດໃຫ້ສາມາດຊຶມຊັບບົດຮຽນທີ່ຮຽນໃນຫ້ອງຮຽນ ເຂົ້າກັບພຶດຕິກາຕົວຈິງທີ່ຕົນເອງໄດ້ຄົ້ນພົບໃນຊຸມຊົນ ແລະ ເກີດປະສົບການຮຽນຮູ້ດ້ວຍຕົນເອງຂຶ້ນມາ ທັງນີ້ກໍ່ຍ້ອນການຮຽນຮູ້ນັ້ນ ເປັນຂະບວນການກໍ່ໃຫ້ເກີດຮູບແບບ ແລະ ພັດທະນາອົງຄວາມຮູ້, ທັກສະ, ທັດສະນະຄະຕິ ແລະ ພຶດຕິກຳ Nganramom (2016) ເຊິ່ງເປັນຜົນມາຈາກ ການສຶກສາ ແລະ ການຝຶກອົບຮົມ, ການຄັດເກົາຂອງສັງຄົມ ແລະ ປະສົບການຂອງຕົນເອງ ເຊິ່ງນີ້ເອງເປັນປັດໄຈສຳຄັນທີ່ເຮັດໃຫ້ເຂົາເຈົ້າມີຜົນການຮຽນຫຼັງການທົດສອບ ສູງກ່ວາຄະແນນທົດສອບກ່ອນລົງຮຽນຮູ້ກັບຊຸມຊົນ ເຊິ່ງເຫັນວ່າໄດ້ມີນັກຄົ້ນຄ້ວາຫຼາຍທ່ານ ທີ່ໄດ້ດຳເນີນການວິໄຈເລື່ອງນີ້ ແລະ ມີຜົນການສຶກສາທີ່ສອດຄ່ອງກັນ ເປັນຕົ້ນແມ່ນ ການຄົ້ນຄວ້າຂອງ Khampor (2018) ທີ່ໄດ້ສຶກສາການຈັດການຮຽນຮູ້ເພື່ອເສີມສ້າງພະລັງຊຸມຊົນດ້ວຍຈິດອາສາ ເຊິ່ງຜົນການສຶກສາພົບວ່າ ການຈັດການຮຽນຮູ້ກັບຊຸມຊົນນັ້ນ ເປັນການຈັດການຮຽນໂດຍເນັ້ນຜູ້ຮຽນເປັນສຳຄັນ, ເປັນການບູລະນາການຄວາມຮູ້ຫຼາກຫຼາຍສາຂາວິຊາເຂົ້າກັນເຮັດໃຫ້ຜູ້ຮຽນທີ່ເຂົ້າຮ່ວມກິດຈະກຳເກີດການຮຽນຮູ້ດ້ວຍຕົນເອງ ແລະ ເປັນການປູກຈິດສຳນຶກຮັກທ້ອງຖິ່ນນຳອີກ ເຊິ່ງການສຶກສາດັ່ງກ່າວນີ້ແມ່ນໄດ້ໃຊ້ວິທີການຈັດການຮຽນຮູ້ທີ່ຄ້າຍຄືກັບຮູບແບບທົດລອງດຽວກັນກັບພວກເຮົາ. ແລະ ນອກຈາກນີ້ກໍ່ຍັງມີການຄົ້ນຄວ້າຂອງ Phatarakangvarn (2018) ທີ່ໄດ້ສຶກສາ ພຶດຕິກາການວາງແຜນເລື່ອງການຈັດການສິ່ງແວດລ້ອມສຳລັບນັກຮຽນຊັ້ນມັດທະຍົມປີທີ 6 ດ້ວຍການຈັດການຮຽນຮູ້ໂດຍໃຊ້ຊຸມຊົນເປັນຖານ ເຊິ່ງຜົນການສຶກສາພົບວ່າຜົນສຳເລັດທາງການຮຽນ ເລື່ອງການຈັດການສິ່ງແວດລ້ອມ ຂອງນັກຮຽນຫຼັງການຮຽນໂດຍໃຊ້ຊຸມຊົນເປັນຖານ ສູງກ່ວາກ່ອນການຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .

ນອກຈາກນີ້ຜົນການສຶກສາຍັງພົບວ່າ ນັກສຶກສາທີ່ມາຈາກຕ່າງພູມລຳເນົາ ພົບວ່າ ນັກສຶກສາທີ່ມາຈາກພູມລຳເນົາຕ່າງກັນ ແມ່ນມີຜົນການຮຽນທີ່ບໍ່ແຕກຕ່າງກັນ ເຊິ່ງເປັນການຄົ້ນພົບທີ່ຂ້ອນຂ້າງປະຫຼາດໃຈສຳລັບພວກເຮົາ ໂດຍທີ່ບໍ່ເປັນໄປຕາມສົມມຸດຖານທີ່ກຳນົດໄວ້ວ່ານັກສຶກສາທີ່ມາຈາກພູມລຳເນົາຕ່າງກັນ ຈະມີຜົນການທົດສອບທີ່ແຕກຕ່າງກັນ, ສາເຫດທີ່ພວກເຮົາມີສົມມຸດຖານເຊັ່ນນີ້ ກໍ່ເພາະວ່າການນັກສຶກສາກຸ່ມເປົ້າໝາຍຂອງພວກເຮົາ ແມ່ນມີທັງຜູ້ທີ່ມາຈາກຕົວເມືອງ ແລະ ມາຈາກຊົນນະບົດ ໂດຍການລົງຊຸມຊົນຂອງພວກເຮົານັ້ນແມ່ນໄດ້ເລັ່ງເປົ້າໝາຍໃສ່ເຂດຫ່າງໄກສອກຫຼີກ ທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ພື້ນຖານໂຄງລ່າງ, ໃນຂະນະທີ່ເນື້ອໃນຂອງແບບທົດສອບຂອງພວກເຮົາ ກໍ່ເນັ້ນປະເມີນພັດທະນາການທັກສະດ້ານສັງຄົມ youthpower (2022); ທີ່ເກີດຂຶ້ນກັບນັກສຶກສາລະຫວ່າງການເຮັດກິດຈະກຳກັບປະຊາຊົນທ້ອງຖິ່ນ, ແຕ່ເຖິງຢ່າງໃດກໍ່ຕາມ ເມື່ອວິເຄາະລະອຽດເຖິງເນື້ອໃນຫຼັກສູດຂອງວິຊາການພັດທະນາຊຸມຊົນ ແລະ ຊົນນະບົດນີ້ແລ້ວ ເຫັນວ່າເນື້ອໃນບົດຮຽນສ່ວນໃຫຍ່ແມ່ນກ່ຽວຂ້ອງກັບບັນດາແນວທາງນະໂຍບາຍຂອງພັກ-ລັດ ຕໍ່ກັບການພັດທະນາເສດຖະກິດ ເຊິ່ງເປັນທິດສະດີເອກະສານທີ່ນັກສຶກສາຄູວິທະຍາສາດການເມືອງມີຄວາມຄຸ້ນເຄີຍ ແລະ ຄົ້ນຄ້ວາຢ່າງເປັນປະຈາຢູ່ແລ້ວ ເຊິ່ງອາດເປັນສາເຫດໜຶ່ງຂອງການມີຜົນການຮຽນບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິ ຂອງກຸ່ມນັກສຶກສາຈາກຕົວເມືອງ ແລະ ນັກສຶກສາຈາກຊົນນະບົດ ທີ່ຮ່ວມຮຽນຫ້ອງດຽວກັນ

ຄຽງຄູ່ກັບການປະເມີນຄວາມເຂົ້າໃຈຂອງນັກສຶກສານັ້ນ ໃນການຄົ້ນຄວ້າຄັ້ງນີ້ ຍັງໄດ້ມີການສຶກສາທັດສະນະຄະຕິຂອງນັກສຶກສານໍາອີກ ໃນເລື່ອງຄໍາຄິດເຫັນຕໍ່ກັບການຈັດການຮຽນຮູ້ວິຊາພັດທະນາຊຸມຊົນ ແລະ ຊົນນະບົດ ໂດຍການນໍາພານັກສຶກສາລົງຮາກຖານ ຮຽນຮູ້ປະສົບການພຶດຕິກໍາຕົວຈິງຈາກພໍ່ແມ່ປະຊາຊົນ ແລະ ອານາດການປົກຄອງຂອງຊຸມຊົນ ໂດຍພົບວ່ານັກສຶກສາແມ່ນມີທັດສະນະຄະຕິຕໍ່ກັບການຈັດການຮຽນ-ການສອນ ແບບນີ້ໃນລະດັບເຫັນດີຫຼາຍ ສະແດງໃຫ້ເຫັນວ່າ ສະຖານທີ່ທີ່ພວກເຮົານາພານັກສຶກສາລົງຮາກຖານນັ້ນ ແມ່ນເປັນເຫດຜົນໜຶ່ງຂອງຄວາມກະຕືລືລົ້ນໃນການເຂົ້າຮ່ວມກິດຈະກໍາການຮຽນ ສອດຄ່ອງກັບການຄົ້ນຄວ້າຂອງ SILIVANH et al, (2019) ທີ່ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນທີ່ເມືອງວຽງຄໍາ ແຂວງຫຼວງພະບາງ ເຊິ່ງເປັນສະຖານທີ່ໃກ້ຄຽງກັບເຂດທີ່ນັກສຶກສາລົງຊຸມຊົນນັ້ນ ພົບວ່າ ພຶດຕິກໍາການຮຽນຂອງຜູ້ຮຽນ ແມ່ນມີຄວາມສໍາພັນກັບສະຖານທີ່ຄົ້ນຄວ້າຮໍ່າຮຽນຢ່າງມີຄວາມສໍາຄັນທາງສະຖິຕິ. ເຊິ່ງພວກເຮົາສາມາດສັງເກດໄດ້ຢ່າງຊັດເຈນ ເຖິງຄວາມຈູບຈ້າວຫ້າວຫັນຂອງນັກສຶກສາ ໃນລະຫວ່າງການປະຕິບັດກິດຈະກາຢູ່ກັບຊຸມຊົນ ໃນນັ້ນດ້ານການມີສ່ວນຮ່ວມຂອງປະຊາຊົນແມ່ນມີສະຖິຕິໃນລະດັບຫຼາຍທີ່ສຸດ, ຂໍ້ມູນເຫຼົ່ານີ້ມັນໄດ້ສະທ້ອນຢ່າງຊັດເຈນເຖິງທັດສະນະຄະຕິຂອງນັກສຶກສາຕໍ່ກັບການຮຽນຮູ້ປະສົບການຈິງກັບຮາກຖານຊຸມຊົນ; ນີ້ສະແດງໃຫ້ເຫັນວ່າການສົມທຽບທິດສະດີໃນຫ້ອງຮຽນ ກັບ ພຶດຕິກໍາຈິງໃນຊຸມຊົນ ແມ່ນສາມາດເຮັດໃຫ້ເກີດບັນຍາກາດການຮຽນທີ່ສົມຈິງ ແລະ ສ້າງອົງຄວາມຮູ້ໂດຍກົງໃຫ້ກັບນັກສຶກສາ, ໂດຍໃນໄລຍະທີ່ຜ່ານມາກໍ່ໄດ້ມີການຄົ້ນຄວ້າຂອງຫຼາຍທ່ານໃນຂົງເຂດວິທະຍາສາດການເມືອງ ໂດຍການນາໃຊ້ຮູບແບບການຈັດການຮຽນຮູ້ທີ່ເນັ້ນໃຫ້ນັກສຶກສາເຂົ້າເຖິງປະສົບການຈິງໃຫ້ຫຼາຍທີ່ສຸດ ເຊິ່ງໄດ້ຮັບການຕອບຮັບຈາກນັກສຶກສາໄປໃນທິດທາງດຽວກັນ ເປັນຕົ້ນແມ່ນການຄົ້ນຄວ້າຂອງ KHOSAIGNOH et al, (2020) ໄດ້ສຶກສາຜົນການນໍາໃຊ້ວິທີການສອນແບບຄົ້ນພົບ ໃນການສອນວິຊາ ຂະບວນກໍາມະກອນ ແລະ ຄອມມູນິດສາກົນ ສາລັບນັກສຶກສາຄູວິທະຍາສາດການເມືອງ ສົກສຶກສາ 2018-2019 ເຊິ່ງວິທີການສອນແບບຄົ້ນພົບ (Key Explorer Method) ນີ້ແມ່ນເປັນໜຶ່ງໃນຮູບແບບການສອນທີ່ເນັ້ນໃຫ້ຜູ້ຮຽນຄົ້ນຄວ້າຈາກການສົມທຽບທິດສະດີ ແລະ ພຶດຕິກາຕົວຈິງ ເຊິ່ງການທົດລອງແມ່ນໄດ້ຮັບການຕອບຮັບຈາກນັກສຶກສາເປັນຢ່າງດີ ຈາກຜົນການຄົ້ນຄວ້າເຫັນວ່ານັກສຶກສາມີທັດສະນະຄະຕິເຫັນດີໃນລະດັບຫຼາຍ; ແລະ ນອກຈາກນີ້ ອີກປະການໜຶ່ງທີ່ມີຄວາມເປັນໄປໄດ້ຄື ປັດໄຈສ່ວນບຸກຄົນໂດຍລວມຂອງນັກສຶກສາກຸ່ມເປົ້າໝາຍກຸ່ມນີ້ແມ່ນມີຄວາມຕ້ອງການຮຽນຮູ້ໃນລະດັບສູງ ໂດຍສະເພາະການຮຽນຮູ້ພາກປະຕິບັດ ເມື່ອປຽບທຽບກັບການຮຽນຮູ້ທິດສະດີ ຫຼື ຮຽນຜ່ານລະບົບອອນລາຍແລ້ວ ເຫັນວ່າບໍ່ຄ່ອຍໄດ້ຮັບການຍອມຮັບຈາກນັກສຶກສາເທົ່າທີ່ຄວນ ສະແດງອອກໃນຜົນການຄົ້ນຄວ້າ XANG et al (2021) ທີ່ໄດ້ສຶກສາທັດສະນະຄະຕິ ຂອງນັກສຶກສາຢູ່ພາຍໃນຄະນະສຶກສາສາດ ຕໍ່ກັບການຈັດການສອນອອນລາຍໃນໄລຍະການລະບາດຂອງພະຍາດໂຄວິດ 19 ໂດຍໄດ້ໃຊ້ກຸ່ມເປົ້າໝາຍລວມໃນຄະນະສຶກສາສາດ ເຊິ່ງເປັນກຸ່ມເປົ້າໝາຍດຽວກັນກັບການຄົ້ນຄວ້າຄັ້ງນີ້ ກໍ່ໄດ້ຮັບການຕອບຮັບທີ່ຄ້າຍຄືກັນຄືນັກສຶກສາມີທັດສະນະຄະຕິຕໍ່ກັບການຮຽນອອນລາຍເຫັນດີໃນລະດັບປານກາງເທົ່ານັ້ນ ນີ້ສະແດງວ່າ ນັກສຶກສາແມ່ນມີຄວາມສົນໃຈເຂົ້າຮ່ວມການຮຽນໃນຮູບແບບທີ່ໄດ້ລົງມືປັດຕິບັດຕົວຈິງຫຼາຍກ່ວາ ເຖິງວ່າຈະເປັນການຮຽນໃນຫ້ອງຮຽນ ຫຼື ນອກຫ້ອງຮຽນກໍ່ຖາມ ຖ້າຫາເປັນການຮຽນສະເພາະນາມມະທາແລ້ວແມ່ນບໍ່ຄ່ອຍໄດ້ຮັບການຕອບຮັບຫຼາຍພໍປານໃດ

## 5. ສະຫຼຸບ

ການຄົ້ນຄວ້າຄັ້ງນີ້ ເປັນການສຶກສາຜົນການຈັດການຮຽນຮູ້ວິຊາ ການພັດທະນາຊຸມຊົນ ແລະ ຊົນນະບົດ ໂດຍການນາພານັກສຶກສາລົງຮາກຖານເພື່ອຮຽນຮູ້ພຶດຕິກໍາຕົວຈິງ ຂອງການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ພາຍຫຼັງທີ່ໄດ້ສາເລັດການຮຽນພາກທິດສະດີໃນຫ້ອງຮຽນ ໂດຍຈຸດປະສົງຂອງການຄົ້ນຄວ້າແມ່ນເພື່ອປະເມີນຜົນການຮຽນຂອງນັກສຶກສານັບທັງຕອນຮຽນພາກທິດສະດີ ແລະ ພາຍຫຼັງກັບຈາກການລົງຮາກຖານ; ແລະ ດາເນີນການສຶກສາທັດສະນະຄະຕິຂອງນັກສຶກສາ ຕໍ່ກັບຂະບວນການຈັດການຮຽນຮູ້ດັ່ງກ່າວ ເຊິ່ງຜົນການຄົ້ນຄວ້າພົບວ່າ ພາຍຫຼັງການລົງຮາກຖານຮຽນຮູ້ກັບຊຸມຊົນກັບຄືນມາ ນັກສຶກສາແມ່ນມີຄວາມເຂົ້າໃຈເພີ່ມຂຶ້ນຕໍ່ກັບວຽກງານພັດທະນາຊົນນະບົດ ໂດຍມີຄະແນນປະເມີນສູງກ່ວາການປະເມີນພາຍຫຼັງຮຽນທິດສະດີໃນຫ້ອງຮຽນຢ່າງຊັດເຈນ. ພ້ອມກັນນີ້ ຜົນການວິເຄາະຂໍ້ມູນຍັງໃຫ້ຮູ້ວ່າ ນັກສຶກສາທີ່ມາຈາກພູມລໍາເນົາຕ່າງກັນ ລະຫວ່າງນັກສຶກສາທີ່ມາຈາກຕົວເມືອງ ແລະ ນັກສຶກສາທີ່ມາຈາກຊົນນະບົດ ແມ່ນມີຜົນການຮຽນບໍ່ແຕກຕ່າງກັນ. ບໍ່ພຽງເທົ່ານີ້ ເຂົາເຈົ້າຍັງມີທັດສະນະຄະຕິເຫັນດີໃນລະດັບຫຼາຍ ຕໍ່ການເດີນທາງຮຽນຮູ້ຮ່ວມກັບຊຸມຊົນຮາກຖານ ເພື່ອເປັນການປຽບທຽບຄວາມຮູ້ພາກທິດສະດີທີ່ໄດ້ຮຽນມາ ແລະ ສັງເຄາະຄວາມຮູ້ໃໝ່ໃຫ້ກັບຕົນເອງ ແລະ ໝູ່ເພື່ອນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ຄະນະສຶກສາສາດ. (2018). *ວິທີສອນວິທະຍາສາດການເມືອງ.* ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ຄະນະໂຄສະນາອົບຮົມສູນກາງພັກ. (2016). *ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ.* ນະຄອນຫຼວງວຽງຈັນ: ຄະນະໂຄສະນາອົບຮົມສູນກາງພັກ.

ສູນພັດທະນາຄູ ແລະ ກົມສ້າງຄູ. (2019). *ຫຼັກສູດສ້າງຄູມັດທະຍົມ ລະດັບປະລິນຍາຕີ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາ ສາທິການ ແລະ ກິລາ.

ສໍານັກງານສະຖິຕິແຫ່ງຊາດ. (2014). ການເທັກນິກການສຸ່ມກຸ່ມ ຕົວຢ່າງ ແລະ ການປະມານຄ່າ. ບາງກອກ: ສານັກງານ ສະຖິຕິແຫ່ງຊາດໄທ.

ແຂມມະນີ, ທ. (2012). *ສາດການສອນ* (ລະດັບສຽງ. 3). ບາງກອກ: ສູນໜັງສືຈຸລາ.

ເນືອງສະເຫຼີມ, ປ. (2013). *ການວິໄຈທາງການສຶກສາ* (ລະດັບສຽງ. 2). ບາງກອກ: ບໍລິສັດວິປີນ 1771 ຈໍາກັດ.

American Heritage Schools. (2021). *Career success depends on so much more than students' subject-matter knowledge and expertise*. Retrieved from www.ahschool.com: https://www.ahschool.com/blog/read-more/~board/blog/post/the-importance-of-soft-skills-in-education

KHOSAIGNOH, S., LIAMAHER, Y., SOULIVONG, P.,SIRIRATH, K. (2020). Learning activity development through Key Explores Method (KEM) for the insructor in Faculty of Education, Souphanouvong University, Academic year 2018-2020. *Souphanovong University Journal of Multidisciplinary Research and Development, 6*(2), 90. Retrieved from http://www.su-journal.com/browse_article/view_journal.php?art_id=117

Nganramom, C. (2016). *Community learning Theory.* Bangkok: TDRM Insitution.

Khampor, S. (2018). *Volunting to enhance community learning* (Vol. 8). Varayalongkorn Uniersity.

Phatarakangvarn, C. (2018). *Planning behavior for environmental management for 6th-grade secondary school students through community-based learning.* Bangkok: Silapakorn University.

SILIVANH, S.,THIPPHAPHONE,K., KHOTSAIGNO, S. (2019). Factors influencing on students' learning problems at primary school in Viengkham District, Luang Prabang Province. *Souphanouvong University Journal of Multidisciplinary Research and Development (SUJMRD), 6*(2). Retrieved from http://www.su-journal.com/index.php/su/article/view/282

Souphanovong University. (2022). *Research Report.* LuangPrabang: Souphanovong University Funded by HANDONG GLOBAL UNIVERSITY AND UNITWIN.

Yang XANG,Y., KHOTSAIGNOH, S. (2021). Student's attitude toward an online instruction at the faculty of education, Souphanouvong university academic years 2019-2020. *Souphanouvong University Journal of Multidisciplinary Research and Development, 7*(2), 352-360.

Youthpower. (2022). *Key Soft Skills*. Retrieved from youthpower.org: https://www.youthpower.org/soft-skills-positive-youth-development-key-soft-skills

ຕາຕະລາງ 1: ຜົນການຄະແນນຜົນການທົດສອບ ກ່ອນ ແລະ ຫຼັງການລົງຮຽນຮູ້ກັບຊຸມຊົນ

**Paired Samples Statistics**

| | | Mean | N | Std. Deviation | Std. Error Mean |
|---|---|---|---|---|---|
| Pair 1 | Pretest | 6.3103 | 58 | .75989 | .09978 |
| | posttest | 7.5776 | 58 | .97243 | .12769 |

ຕາຕະລາງ 2: ປຽບທຽບຄ່າສະເລ່ຍຂອງຄະແນນທົດສອບ ກ່ອນ ແລະ ຫຼັງ ການລົງຊຸມຊົນ

<table>
<tr><th colspan="10">Paired Samples Test</th></tr>
<tr><td colspan="2" rowspan="3"></td><td colspan="5">Paired Differences</td><td rowspan="3">t</td><td rowspan="3">df</td><td>Sig. (2-tailed)</td></tr>
<tr><td rowspan="2">Mean</td><td rowspan="2">Std. Deviation</td><td rowspan="2">Std. Error Mean</td><td colspan="2">95% Confidence Interval of the Difference</td><td rowspan="2"></td></tr>
<tr><td>Lower</td><td>Upper</td></tr>
<tr><td>Pair 1</td><td>Pretest - posttest</td><td>-1.26724</td><td>1.15931</td><td>.15222</td><td>-1.57207</td><td>-.96242</td><td>-8.325</td><td>57</td><td>.000</td></tr>
</table>

ຕາຕະລາງ 3: ຜົນຄະແນນສະເລ່ຍຂອງນັກສຶກສາ ຕາມພູມລໍາເນົາ

**Group Statistics**

| | Original | N | Mean | Std. Deviation | Std. Error Mean |
|---|---|---|---|---|---|

| | | | | | |
|---|---|---|---|---|---|
| posttest | Town | 21 | 7.7143 | 1.07902 | .23546 |
| | Rural | 37 | 7.5000 | .91287 | .15008 |

ຕາຕະລາງ 4: ຜົນການປຽບທຽບຄ່າສະເລ່ຍ ຄະແນນທົດສອບຫຼັງການລົງຊຸມຊົນຂອງນັກສຶກສາ ຕາມພູມລາເນົາເດີມ

**Independent Samples Test**

| | | Levene's Test for Equality of Variances | | t-test for Equality of Means | | | | | | |
|---|---|---|---|---|---|---|---|---|---|---|
| | | F | Sig. | t | df | Sig. (2-tailed) | Mean Difference | Std. Error Difference | 95% Confidence Interval of the Difference | |
| | | | | | | | | | Lower | Upper |
| posttest | Equal variances assumed | 1.275 | .264 | .804 | 56 | .425 | .21429 | .26651 | -.31960 | .74817 |
| | Equal variances not assumed | | | .767 | 36.228 | .448 | .21429 | .27922 | -.35188 | .78045 |

ຕາຕະລາງ 5: ຜົນການສຶກສາທັດສະນະຄະຕິຂອງນັກສຶກສາ ຕໍ່ກັບການຈັດການຮຽນ-ການສອນ

| ລ/ດ | ເນື້ອໃນການປະເມີນ | Mean | S.D | Level |
|---|---|---|---|---|
| 1 | ດ້ານຫຼັກການຈັດການຮຽນຮູ້ | 3.87 | 0.75 | agree |
| 2 | ດ້ານການມີສ່ວນຮ່ວມຂອງຊຸມຊົນ | 4.25 | 0.68 | Strongly Agree |
| 3 | ດ້ານການພັດທະນາທັກສະຂອງນັກສຶກສາ | 3.50 | 0.73 | Neutral |
| 4 | ດ້ານການພັດທະນາຫຼັກສູດ | 3.15 | 0.82 | Disagree |
| | Total | 3.69 | 0.75 | Agree |